Washington State Department of Social & Health Services
Transforming lives

# ການສະລະສິດໃນການຟັງເຣື່ອງການໝົດສິດຈາກອຳນາດການປົກຄອງ

## Waiver of Administrative Disqualification Hearing

ສຳລັບໂຄງການຊ່ວຍເຫລືອອາຫານຂອງຣັດວໍຊິງຕັນ

| ວັນທີ | ຊື່ຂອງລູກຄ້າ | SSN ຂອງລູກຄ້າ | ວັນເກີດຂອງລູກຄ້າ | ເລກ ID ຂອງລູກຄ້າ |
|---|---|---|---|---|
| | | | | |

ທ່ານກຳລັງຖືກສົ່ງຕໍ່ໄປເອົາການຟັງເຣື່ອງຈາກອຳນາດການປົກຄອງໂດຍອີງຕາມຄວາມເຊື່ອຖືຂອງພວກເຮົາວ່າທ່ານໄດ້ເຮັດຜິດໃນການລ່ວງລະເມີດໂຄງການໂດຍເຈດຕະນາ (Intentional Program Violation) (IPV). ທ່ານມີສິດທີ່ຈະມາປາກົດຕົວໃນເວລາຟັງເຣື່ອງ ແລະ ຄັດຄ້ານຂໍ້ ກ່າວຫາໃສ່ທ່ານທ່ານຍັງມີສິດອີກຄືກັນທີ່ຈະສະລະສິດ (ຍົກເລີກ) ສິດທິຂອງທ່ານຕໍ່ການຟັງເຣື່ອງ. **<u>ຖ້າຫາກວ່າທ່ານຕັດສິນໃຈທີ່ຈະສະລະສິດການຟັງເຣື່ອງຂອງທ່ານ, ທ່ານຕ້ອງໄດ້ຮູ້ຈັກສິ່ງຕໍ່ລົງໄປນີ້:</u>**

1. ຖ້າຫາກວ່າທ່ານເຊັນຊື່ໃສ່ໃບຕົກລົງສັນຍາໃບນີ້,ທ່ານຈະຖືກໝົດສິດທີ່ຈະໄດ້ຮັບການຊ່ວຍເຫລືອ ແລະ ມັນຈະຈະມີການລຸດລົງໃນການຊ່ວຍເຫລືອສຳລັບຣະຍະເວລາຂອງການໝົດສິດທັງໝົດເຖິງແມ່ນວ່າທ່ານຈະບໍ່ຍອມຮັບຄວາມຈິງຕາມທີ່ຖືກກ່າວຫາໂດຍຫ້ອງການຂອງຣັດກໍຕາມ.
2. ທ່ານບໍ່ຕ້ອງໄດ້ຍອມຮັບຕໍ່ຂໍ້ ກ່າວຫາແນວໃດແນວນຶ່ງຈັກຢ່າງ. ທ່ານມີສິດທີ່ຈະຍັງມິດຢູ່ຄືເກົ່າກ່ຽວກັບຂໍ້ ກ່າວຫາ, ຍ້ອນວ່າທຸກໆຢ່າງທີ່ທ່ານເວົ້າ ຫລື ເຊັນຊື່ສາມາດຖືກໃຊ້ໃນສານແຫ່ງກົດໝາຍ.
3. ຖ້າຫາກວ່າທ່ານເຊັນຊື່ໃສ່ໃບສະລະສິດໃບນີ້,ທ່ານຍັງຈະຕ້ອງໄດ້ເລືອກເອົານຶ່ງໃນຄຳແຈ້ງການຕໍ່ລົງໄປນີ້ເພື່ອຈະຊີ້ບອກວ່າທ່ານຍອມຮັບຄວາມຈິງ ຫລື ບໍ່ຕໍ່ຄວາມຈິງທີ່ຖືກກ່າວຫາ:
   - ☐ ຂ້າພະເຈົ້າຍອມຮັບຄວາມຈິງຕາມທີ່ຖືກສະເນີມາ ແລະ ເຂົ້າໃຈວ່າການປັບໄໝລົງໂທດການສະລະສິດຈະຖືກວາງໃສ່ຖ້າຫາກວ່າຂ້າພະເຈົ້າເຊັນຊື່ໃສ່ໃບສະລະສິດໃບນີ້.
   - ☐ ຂ້າພະເຈົ້າບໍ່ຍອມຮັບຄວາມຈິງຕາມທີ່ຖືກສະເນີມາວ່າຖືກຕ້ອງ. ເຖິງຢ່າງໃດກໍຕາມ, ຂ້າພະເຈົ້າໄດ້ເລືອກເອົາທີ່ຈະເຊັນຊື່ໃສ່ໃບສະລະສິດໃບນີ້ ແລະ ເຂົ້າໃຈວ່າການປັບໄໝລົງໂທດການສະລະສິດຈະເປັນຜົນອອກມາ.
4. ສະມາຊິກຄອບຄົວຜູ້ໃຫຍ່ທີ່ຍັງເຫລືອຢູ່, ຖ້າມີຢູ່, ຈະຖືກຖືວ່າຮັບຜິດຊອບສຳລັບຈ່າຍເງິນຂອງການທວງທີ່ເປັນຜົນອອກມາ.
5. ການປັບໄໝລົງໂທດຍັງຈະຢູ່ຄືເກົ່າບໍ່ກ່ຽວວ່າທ່ານຈະເລືອກເອົາການຟັງເຣື່ອງ ຫລື ບໍ່ ແລະ ຖືກພົບວ່າຜິດ ຫລື ບໍ່, ຫລື ບໍ່ກ່ຽວວ່າທ່ານສະລະສິດການຟັງເຣື່ອງ ຫລື ບໍ່.

**ການສະລະສິດອັນນີ້ຕ້ອງຖືກສົ່ງກັບຄືນມາພາຍໃນ  ວັນຂອງວັນທີຂ້າງເທິງນີ້.ຖ້າຫາກວ່າບໍ່ມີໃບສະລະສິດຖືກສົ່ງກັບຄືນມາ, ການຟັງເຣື່ອງຈາກອຳນາດການປົກຄອງຈະຖືກເຮັດນັດໃຫ້.**

**ຖ້າຫາກວ່າຜູ້ທີ່ຖືກກ່າວຫາບໍ່ແມ່ນຫົວໜ້າຂອງຄອບຄົວ, ຫົວໜ້າຂອງຄອບຄົວຕ້ອງເຊັນຊື່ໃສ່ໃບສະລະສິດໃບນີ້ອີກຄືກັນຕາມທີ່ຖືກກ່າວຢູ່ໃນກົດໝາຍ 7 CFR 273.16(3).**

**ເພື່ອຣາຍຣະອຽດເພີ້ມເຕີມ, ທ່ານຈະຕິດຕໍ່ຫາ  ໄດ້ທີ່ເລກ  .**

### ການອະທິບາຍຂອງສິດທິຂອງການຟັງເຣື່ອງຂອງທ່ານ

ຖ້າຫາກວ່າທ່ານບໍ່ຍອມຮັບຄວາມຈິງຕາມທີ່ຖືກສະເນີມາວ່າຖືກຕ້ອງ ແລະ ປາກຈະທົດລອງສິດທິຂອງທ່ານໃນການຟັງເຣື່ອງຈາກອຳນາດການປົກຄອງ, ທ່ານບໍ່ຕ້ອງໄດ້ເຮັດແນວໃດຕໍ່ໄປອີກ.
ທ່ານຈະຖືກແຈ້ງບອກກ່ຽວກັບວັນ ແລະ ເວລາ ຂອງການຟັງເຣື່ອງໂດຍຫ້ອງການການຟັງເຣື່ອງຈາກອຳນາດການປົກຄອງ. ໃບແຈ້ງການຈະລວມເອົາສິດທິຂອງການຟັງເຣື່ອງເຫລົ່ານີ້ຕາມທີ່ຖືກບົ່ງຢູ່ໃນກົດໝາຍ 7 CFR 273.16(e)(3).

### ຄຳເຕືອນເຣື່ອງການປັບໄໝລົງໂທດຂອງໂຄງການຊ່ວຍເຫລືອອາຫານ

**ພາຍໃຕ້ກົດໝາຍ WAC 388-446-0020, ບຸກຄົນຈະບໍ່ໄດ້ຮັບການຊ່ວຍເຫລືອອາຫານເປັນເວລາ:**
**<u>ນຶ່ງປີ</u>** ສຳລັບການລ່ວງລະເມີດໂດຍຮູ້ຈັກດີໃນກົດຣະບຽບຂອງການຊ່ວຍເຫລືອອາຫານ ຫລື ໂຄງການຊ່ວຍເຫລືອອາຫານການກິນເພີ້ມເຕີມ (SNAP);
**<u>ສອງປີ</u>** ສຳລັບການລ່ວງລະເມີດເທື່ອທີສອງ; ຫລື ການຕັດສິນລົງໂທດເທື່ອທຳອິດສຳລັບການຊື້, ການຂາຍ, ຫລື ການແລກປ່ຽນການຊ່ວຍເຫລືອອາຫານ ຫລື ການຊ່ວຍເຫລືອ SNAP ສຳລັບທາດຢາເສພຕິດ;
**<u>ສິບປີ</u>** ສຳລັບການເອົາຣາຍຣະອຽດໃຫ້ໂດຍຮູ້ຈັກດີກ່ຽວກັບບັດປະຈຳຕົວ ຫລື ບ່ອນຢູ່ທີ່ບໍ່ຖືກຕ້ອງ ເພື່ອຈະໄດ້ຮັບການຊ່ວຍເຫລືອອາຫານຊ້ຳກັນ;
**<u>ຕະລອດຊີວິດ</u>** ສຳລັບ:
ການລ່ວງລະເມີດຮູ້ຈັກດີໃນກົດຣະບຽບຂອງການຊ່ວຍເຫລືອອາຫານ ຫລື ການຊ່ວຍເຫລືອ SNAP ເທື່ອທີສາມ;
ການຕັດສິນລົງໂທດເທື່ອທີສອງສຳລັບການຊື້, ການຂາຍ, ຫລື ການແລກປ່ຽນການຊ່ວຍເຫລືອອາຫານສຳລັບທາດຢາເສພຕິດ;
ການຕັດສິນລົງໂທດສຳລັບການຊື້, ການຂາຍ, ຫລື ການແລກປ່ຽນການຊ່ວຍເຫລືອອາຫານສຳລັບປືນ, ກະສຸນ, ຫລື ຣະເບີດ; ຫລື
ການຕັດສິນລົງໂທດສຳລັບການຊື້, ການຂາຍ, ຫລື ການແລກປ່ຽນການຊ່ວຍເຫລືອອາຫານທີ່ມີມູນຄ່າ $500 ຫລື ຫລາຍກວ່າ.

**ບຸກຄົນຜູ້ທີ່ລ່ວງລະເມີດໂດຍຮູ້ຈັກດີ ແລະ ໂດຍເຈຕນາໃນກົດຣະບຽບຂອງການຊ່ວຍເຫລືອອາຫານສາມາດຖືກຕັດສິນລົງໂທດ ແລະ ຖືກປັບໄໝຮອດ $250,000 ຫລື ຂັງຄຸກຮອດຊາວປີ ຫລື ທັງສອງຢ່າງ. ເຂົາເຈົ້າຍັງຈະຖືກຕັດສິນລົງໂທດອີກຄືກັນພາຍໃຕ້ກົດໝາຍຂອງຣັດຖະບານກາງອື່ນໆທີ່ກ່ຽວຂ້ອງນຳ.**

| ລາຍເຊັນຂອງບຸກຄົນຜູ້ທີ່ໝົດສິດ | ວັນທີ | ລາຍເຊັນຂອງຫົວໜ້າຄອບຄົວ (HH)<br>(ຖ້າຫາກວ່າຜູ້ທີ່ຖືກກ່າວຫາບໍ່ແມ່ນຫົວໜ້າຄອບຄົວ) | ວັນທີ |
|---|---|---|---|
| | | | |